## ເຂຕສງວນເພື່ອວິທະຍາການແລະທັມຊາຕ

### ເປັນຫຍັງ ຈຶ່ງເອີ້ນວ່າເຂຕສງວນເພື່ອວິທະຍາການ ແລະທັມຊາຕ?

ເຂຕສງວນເພື່ອວິທະຍາການແລະທັມຊາຕ ແມ່ນທີ່ດິນຂອງສາທາຣະນະທີ່ຖືກສງວນໄວ້ ເພາະວ່າເປັນ ບໍຣິເວນທີ່ມີຊັພະຍາກອນທັມຊາຕອັນລ້ຳຄ່າ ແລະຫາໄດ້ຍາກໃນຣັຖມິນນີໂຊຕາ. ປັຈຈຸບັນນີ້ ມີເຂຕສງວນເພື່ອວິທະຍາການແລະທັມຊາຕໃນຣັຖມິນນີໂຊຕາ ໑໒໕ ແຫ່ງ.

ຕົວຢ່າງເຂຕສງວນສຳລັບວິທະຍາການ ແລະທັມຊາຕ ມີດັ່ງຕໍ່ໄປນີ້:

> ເນີນພູແຫ່ງນຶ່ງ ຢູ່ທາງພາກຕາວັນຕົກສ່ຽງໃຕ້ຂອງຣັຖມິນນີໂຊຕາ ເປັນບ່ອນອາໄສຂອງແມງກະເບື້ອຊນິດ ທີ່ຫາໄດ້ຍາກ

> ບໍຣິເວນຫ້ວຍເລິກແຫ່ງນຶ່ງ ຢູ່ທາງທິດເໜືອຂອງຣັຖມິນນີໂຊຕາ ມີຕົ້ນໄມ້ແປກດ່ອນເກີດຂຶ້ນທົ່ວໄປ

> ຕົ້ນໄມ້ແກ່ນ (ໄມ້ໂອກ) ທີ່ບໍ່ເຄີຍຖືກແຕະຕ້ອງ ຢູ່ໃນບໍຣິເວນເຂຕເທສບານ ທີ່ມີດອກໄມ້ປ່າອັນສວຍງາມບານຕາມຣະດູໃບໄມ້ປົ່ງບານ.

ເຂຕສງວນເພື່ອວິທະຍາການແລະທັມຊາຕ ເປັນຊັພຍາກອນອັນລ້ຳຄ່າຂອງຣັຖ ດັ່ງນັ້ນຈຶ່ງໄດ້ຮັບການ ຄຸ້ມຄອງພາຍ ໃຕ້ໂຄງການນຶ່ງຕ່າງຫາກຂອງກົມຊັພະຍາກອນທັມຊາຕທີ່ມີຊື່ວ່າ ໂຄງການເຂຕສງວນເພື່ອວິທະຍາການແລະທັມຊາຕ.



### ເປົ້າໝາຍຂອງໂຄງການ ເຂຕສງວນ ເພື່ອວິທະຍາການ ແລະທັມຊາຕ:

...ແມ່ນເພື່ອປົກປັກຮັກສາທັມຊາຕ ປຣາສຈາກການລົບກວນຕໍ່ສັພະສິ່ງຕ່າງໆ ລ້ຳຄ່າແກ່ການຄົ້ນຄ້ວາທາງດ້ານວິທະຍາການ ແລະການສຶກສາ...

### ວັຕຖຸປະສົງຂອງການກຳນົດເຂຕວິທະຍາການ ແລະທັມຊາຕ:

ເຂດທັມຊາຕຕ່າງໆໃນຣັຖມິນນີໂຊຕາ ຖືກຈັດຕັ້ງຂຶ້ນມາເພື່ອຈຸດປະສົງຫຼາຍຢ່າງເຊັ່ນ:

໑. ຈັດໃຫ້ເປັນພື້ນທີ່ສຳລັບສາທາຣະນະຊົນໄດ້ສຶກສາ ໄດ້ຊົມຕົ້ນໄມ້ແລະສັຕທີ່ຫາໄດ້ຍາກຈາກສະພາບທັມຊາຕຢ່າງແທ້ຈິງ;

໒. ເປັນບໍຣິເວນໃຫ້ນັກວິທຍາສາຕໄດ້ພົບເຫັນທັມຊາຕທີ່ແທ້ຈິງເພື່ອເກັບກຳຂໍ້ມູນກ່ຽວກັບສະພາບແວດລ້ອມທີ່ບໍ່ມີການເຈືອປົນກັບສິ່ງອື່ນຫຼືວັດແທກຄວາມປ່ຽນແປງຂອງສິ່ງແວດລ້ອມ.

໓. ອຳນວຍຫມໍ່ແນວຂອງພືດພັນ ແລະສັດສາວາສິ່ງທີ່ອາຈເປັນປະໂຍດແກ່ການຄົ້ນຄ້ວາ ດ້ານເວຊະກັມ, ກະສິກັມ ແລະອຸດສາຫະກັມໃນວັນນຶ່ງຂ້າງໜ້າ.

໔. ປົກປັກຮັກສາຕົ້ນໄມ້ ແລະສັຕປະເພດທີ່ຫາໄດ້ຍາກທີ່ສຸດດ້ວຍການຈັດເປັນປະເພດຮວມໝູ່ ໂດຍສະເພາະ ເພື່ອຄວາມສຳຄັນກ່ຽວແກ່ດ້ານທໍຣະນີວິທຍາ.



### ພວກເຮົາມີພາຣະໜ້າທີ່ແນວໃດແດ່?

ໃນຖານະທີ່ພວກເຮົາເປັນພົລເມືອງຂອງຣັຖມິນນີໂຊຕາ ມັນເປັນໜ້າທີ່ຮັບຜິດຊອບ ແລະພາຣະໜ້າທີ່ຂອງພວກເຮົາທີ່ຈະຊ່ອຍກັນປົກປັກຮັກສາແຫຼ່ງຊັພະຍາກອນພິເສສຂອງຊາຕ ເພື່ອໃຫ້ຕົ້ນໄມ້ແລະສັດສາວາສິ່ງທີ່ຫາໄດ້ຍາກນີ້ ຍືນຍົງຄົງຕົວຢູ່ໄວ້ໃຫ້ອະນຸຊົນລຸ່ນຫລັງ.

ໂຄງການຈັດເນື້ອທີ່ເພື່ອວິທະຍາການແລະທັມຊາຕ ຂອງກົມຊັພະຍາກອນທັມຊາຕ ມີໜ້າທີ່ຮັບຜິດຊອບໃນການເສາະສແວງຫາໄວ້, ວາງແຜນ ແລະບໍຣິຫານກິຈການເຂຕທັມຊາຕດັ່ງກ່າວ.

ເຂດສງວນເພື່ອວິທະຍາການ ແລະທັມຊາຕ ເປັນເຂດເປີດໃຫ້ເຂົ້າໄປຊົມ, ສຶກສາແລະຄົ້ນຄ້ວາ. ພວກເຮົາສົ່ງເສີມໃຫ້ປະຊາຊົນພົລເມືອງທຸກຄົນເຂົ້າໄປພົບເຫັນ ແລະຮຽນຮູ້ໃນສິ່ງເຫຼົ່ານີ້. ຢ່າງໃດກໍດີ ບໍຣິເວນດັ່ງກ່າວ ເປັນເຂດທີ່ໄດ້ຮັບຜົລສະທ້ອນຈາກພາຍນອກໄດ້ງ່າຍ ດັ່ງນັ້ນຈຶ່ງອາຈຈະເກີດຜົລເສັຍຫາຍຂຶ້ນໄດ້ ຖ້າຫາກປະຕິບັຕໃນທາງບໍ່ຖືກຕ້ອງຫຼືໂພດເກີນໄປ.

ຈຶ່ງຂໍຮ້ອງໃຫ້ທຸກທ່ານປະຕິບັດຕາມກົດຣະບຽບທີ່ໄດ້ວາງໄວ້ ແລະລາຍງານບັນຫາຕ່າງໆທີ່ທ່ານໄດ້ພົບເຫັນ ແລະບອກເລົ່າຕໍ່ໆກັນໄປ ເຖິງເລື້ອງຄວາມ ສຳຄັນຂອງເຂຕສງວນເພື່ອວິທະຍາການແລະທັມຊາຕນີ້.

### ກົດຣະບຽບພື້ນຖານມີຫຍັງແດ່?

໑. ທ່ານຈະເກັບເອົາພືຊພັນ ຫຼືສັຕຕ່າງໆ ຈາກເຂຕສງວນເພື່ອວິທະຍາການ ແລະທັມຊາຕບໍ່ໄດ້;

໒. ທ່ານຈະລ່າສັຕ ແລະຕຶກເບັດຫາປາບໍ່ໄດ້;

໓. ທ່ານຈະພັກແຮມຫຼືຮັປະທານຊຸມແຊວກັນໃນເຂດນີ້ບໍ່ໄດ້;

໔.. ຫ້າມຍວດຍານພາຫານະທີ່ມີເຄື່ອງຈັກທຸກຊນິດເຂົ້າໄປ.

ຖ້າທ່ານຢາກເຫັນໂລກທັມຊາດທີ່ແທ້ຈິງຂອງຣັຖມິນນີໂຊຕາ ຂໍໃຫ້ທ່ານວາງແຜນໄປຊົມເຂດສງວນເພື່ອວິທະຍາການເພື່ອທັມຊາດ ໃນໂອກາດຕໍ່ໄປ.

ຂໍໃຫ້ທ່ານຈົ່ງມີຄວາມເບີກບານມ່ວນຊື່ນກັບການທ່ຽວຊົມແລະຊ່ວຍກັນ ປົກປັກຮັກສາເຂດສງວນ ເພື່ອວິທະຍາການແລະທັມຊາດຂອງເຮົາ!

*ເພື່ອຊາບລາຍລະອຽດຕື່ມກ່ຽວກັບເຂດສງວນເພື່ອວິທະຍາການແລະທັມຊາດ, ໂປຣດຕິດຕໍ່ຫາ:*

*Scientific and Natural Areas Program, Minnesota Department of Natural Resources*
*Section of Ecological Services, 500 Lafayette Road, Box 25, Saint Paul, MN 55155-4007*
*Telephone: (651) 297-2357*



Scientific and Natural Areas Program
Minnesota Department of Natural Resources
Section of Ecological Services
500 Lafayette Rd. Box 25
St. Paul, MN 55155-4007



# ເຂດສງວນເພື່ອວິທະຍາການແລະທັມຊາດ

## ເປັນຫຍັງ ຈຶ່ງເອີ້ນວ່າເຂດສງວນເພື່ອວິທະຍາການ

## Scientific and Natural Areas



Minnesota Department of Natural Resources

Lao